DEPARTMENT OF HEALTH

# ການຕິດຕາມຜ່ານທາງໂທລະສັບຂອງໂຄວິດ-19: ມັນເຮັດວຽກແບບໃດ

ທ່ານອາດຈະໄດ້ຍິນມາວ່າການຕິດຕາມຜ່ານທາງໂທລະສັບ ແມ່ນທາງໜຶ່ງທີ່ຊ່ວຍໃນການຢຸດຢັ້ງການແຜ່ລະບາດຂອງໂຄວິດ-19.

ແຕ່ວ່າການຕິດຕາມຜ່ານທາງໂທລະສັບແມ່ນຫຍັງ?

ການຕິດຕາມ ແມ່ນການຊອກຫາຄົນຜູ້ທີ່ອາດຈະຕິດເຊື້ອ ຫຼື ພະຍາດຕິດຕໍ່ໂຄວິດ-19 – ແລະ ອາດຈະບໍ່ຮູ້ໂຕ –ແລະ ແຈ້ງບອກໃຫ້ພວກເຂົາພັກຢູ່ເຮືອນ ແລະ ໃຫ້ຢູ່ຫ່າງຈາກຄົນອື່ນ ເພື່ອບໍ່ໃຫ້ພວກເຂົາໄປແຜ່ເຊື້ອໃຫ້ຄົນອື່ນອີກ.

ຫຼັງຈາກທີ່ຜູ້ໃດຜູ້ໜຶ່ງໄດ້ຮັບເຊື້ອໂຄວິດ-19, ພວກເຂົາແມ່ນໄດ້ເລີ່ມຕົ້ນແຜ່ເຊື້ອໄປຫາຄົນອື່ນໄດ້ທຸກບ່ອນນັບຈາກ 2 ຫາ 14 ວັນຫຼັງຈາກນັ້ນ. ໃນລະຫວ່າງນີ້, ຄົນອາດຈະບໍ່ຮູ້ສຶກວ່າເປັນໄຂ້ ແຕ່ພວກເຂົາສາມາດແຜ່ເຊື້ອໂຄວິດ-19 ໄປໃຫ້ຄົນອື່ນໄດ້.

ນີ້ແມ່ນສິ່ງທີ່ຄົນສ່ວນຫຼາຍຕິດເຊື້ອນັບມື້ນັບຫຼາຍຂຶ້ນ.

ການຕິດຕາມຜ່ານທາງໂທລະສັບແມ່ນທາງໜຶ່ງທີ່ເຮັດໃຫ້ຢຸດວົງຈອນນີ້.

ນີ້ແມ່ນການເຮັດວຽກຂອງມັນ:

ພະແນກສາທາລະນະສຸກມິນນີໂຊຕາ (Minnesota Department of Health) ແຈ້ງໃຫ້ທຸກໆຄົນຜູ້ກວດໂຄວິດ-19 ມີຜົນເປັນບວກ, ມັນຄືກັນກັບໂຣກໄຂ້ຫວັດໃຫຍ່. ຖ້າທ່ານກວດໂຄວິດ-19 ມີຜົນເປັນບວກ, ທ່ານສາມາດຄາດເດົາໄດ້ວ່າຈະໄດ້ຮັບ ໂທລະສັບຈາກຜູ້ສຳພາດສຳນວນຂອງໂຄວິດ-19. ບາງຄັ້ງພວກເຂົາອາດຈະເອີ້ນວ່າ ຜູ້ຕິດຕາມທາງໂທລະສັບ. ຜູ້ສຳພາດສຳນວນເຮັດວຽກໃຫ້ກັບລັດ, ທ້ອງຖິ່ນ, ຫຼື ພະແນກສາທາລະນະສຸກຊົນເຜົ່າ.

ຜູ້ສຳພາດສຳນວນໂທຫາທ່ານເພື່ອໃຫ້ຂໍ້ມູນກ່ຽວກັບໂຄວິດ-19, ສອບຖາມກ່ຽວກັບສຸຂະພາບຂອງທ່ານ, ແລະ ຕອບຄຳຖາມຂອງທ່ານ. ກ່ອນອື່ນໝົດ ພວກເຂົາຈະອ່ານຂໍ້ຄວາມ ການເຕືອນຂອງເທັນເນັດເຊັນ (Tennessen). ຂໍ້ມູນນີ້ແມ່ນເປັນສ່ວນຕົວ ແລະ ສອບຖາມຖ້າວ່າທ່ານເຫັນດີໃຫ້ເປີດເຜີຍຂໍ້ມູນສຸຂະພາບຂອງທ່ານໃຫ້ແກ່ຜູ້ອື່ນຫຼືບໍ່. ຂໍ້ມູນຂອງທ່ານຈະບໍ່ຖືກເປີດເຜີຍໃຫ້ຄົນອື່ນຖ້າທ່ານບໍ່ອະນຸຍາດ.

ພວກເຂົາຍັງຖາມທ່ານອີກກ່ຽວກັບຜູ້ທີ່ທ່ານໄດ້ພົວພັນໃກ້ຊິດຜ່ານມານັບຈາກ 2-3 ມື້ກ່ອນທີ່ຜົນກວດຂອງທ່ານຈະເປັນບວກ. ໂດຍທົ່ວໄປ, ຜູ້ທີ່ໃກ້ຊິດກັບຜູ້ທີ່ເປັນໂຄວິດ-19 ທີ່ໃຊ້ເວລາຮ່ວມກັນຫຼາຍກວ່າ 15 ນາທີແມ່ນຖືກເອີ້ນວ່າ ຜູ້ທີ່ພົວພັນ. ຜູ້ທີ່ສຳພາດສຳນວນຈະຊ່ວຍທ່ານຊອກຫາຜູ້ທີ່ອາດຈະພິຈາລະນາວ່າເປັນຜູ້ທີ່ພົວພັນ.

ຫຼັງຈາກນັ້ນ ຜູ້ສຳພາດສຳນວນ ສາມາດໂທຫາຜູ້ທີ່ທ່ານພົວພັນ ແລະ ບອກໃຫ້ເຂົາເພື່ອເຂົ້າຮັບການກວດຫາເຊື້ອ. ພວກເຂົາຈະບໍ່ເປີດເຜີຍຊື່ຂອງທ່ານ ຫຼື ຂໍ້ມູນສ່ວນຕົວອື່ນໆລວມທັງເບີຕິດຕໍ່ຂອງທ່ານຖ້າທ່ານບໍ່ອະນຸຍາດ. ບອກໃຫ້ພວກເຂົາພັກຢູ່ບ້ານເປັນເວລາ 14 ວັນ, ນັບຈາກມື້ສຸດທ້າຍທີ່ພວກເຂົາໄດ້ຢູ່ໃກ້ຊິດກັບທ່ານ.  ຖ້າພວກເຂົາພັກຢູ່ບ້ານ, ເຊື້ອພະຍາດກໍ່ຈະຢູ່ໃນບ້ານຂອງພວກເຂົາຄືກັນ.

ການຕິດຕາມຜ່ານທາງໂທລະສັບ ຈະສາມາດໃຊ້ໄດ້ເມື່ອທ່ານຊ່ວຍພວກເຮົາເທົ່ານັ້ນ.

ຖ້າວ່າຜູ້ສຳພາດສຳນວນໂທຫາທ່ານ, ທ່ານຕ້ອງຮັບໂທລະສັບ. ຖ້າທ່ານບໍ່ຮັບສາຍພວກເຂົາ, ພວກເຂົາຈະຝາກຂໍ້ຄວາມໄວ້. ຕ້ອງໂທກັບຫາພວກເຂົາ.

ຜູ້ສອບຖາມສຳນວນຈະບອກທ່ານວ່າພວກເຂົາແມ່ນໃຜ, ພວກເຂົາເຮັດວຽກໃຫ້ໃຜ, ແລະ ນັ້ນກໍ່ຄືພວກເຂົາໂທຫາກ່ຽວກັບໂຄວິດ-19. ພວກເຂົາຈະບໍ່ຖາມກ່ຽວກັບສະຖານະພາບການເຂົ້າເມືອງຂອງທ່ານ, ເງິນ, ຫຼື ທະນາຄານ, ບັດເຄຣດິດ, ນ້ຳເບີປະກັນສັງຄົມຂອງທ່ານ.

ຖ້າທ່ານບໍ່ຕ້ອງການເວົ້າພາສາອັງກິດ, ຈົ່ງບອກໃຫ້ຜູ້ສອບຖາມສຳນວນຮູ້. ພວກເຂົາຈະເອົາຜູ້ສຳພາດສຳນວນຜູ້ອື່ນທີ່ເວົ້າເປັນພາສາຂອງທ່ານ ຫຼື ໃຊ້ຜູ້ແປພາສາຜ່ານທາງໂທລະສັບ.

ຜູ້ສຳພາດຍັງຕ້ອງບອກຂໍ້ມູນຕ່າງໆໃຫ້ທ່ານຮັບຊາບເຊັ່ນວ່າ – ຂໍ້ມູນ ການປະຕິບັດເພື່ອປ້ອງກັນຄົນທີ່ອາໃສຢູ່ນຳທ່ານ ແລະ ສາມາດເອົາອາຫານ, ຢາ, ແລະ ສິ່ງຈຳເປັນອື່ນໆທີ່ທ່ານຕາມຄວາມຕ້ອງການໄດ້ດ້ວຍວິທີໃດເພື່ອໃຫ້ທ່ານຢູ່ເຮືອນໄດ້ຢ່າງປອດໄພ.

ຍ້ອນການຮ່ວມມືແລະຊ່ວຍເຫຼືອຈາກການຕິດຕາມທາງໂທລະສັບ ແລະ ຜູ້ສຳພາດສຳນວນ, ຈຶ່ງເຮັດໃຫ້ພວກເຮົາສາມາດຫຼຸດຜ່ອນການແຜ່ລະບາດຂອງໂຄວິດ-19. ຂອບໃຈ, ສຳລັບການປະຕິບັດຫນ້າທີ່ຂອງທ່ານ.

Minnesota Department of Health
Communications Office
PO Box 64975
St. Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us

10/19/20 (Lao)

*ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ຈົ່ງໂທຫາ: 651-201-4989*